**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ ເລກທີ 1555 /ກງ

ນະຄອນຫຼວງວຽງຈັນ, ວັນທີ 06 ພຶດສະພາ 2026

# ຄໍາແນະນໍາ
# ວ່າດ້ວຍ ການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ

- ອີງຕາມ ຄໍາສັ່ງວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາແຮ່ທາດຕົກຂ້ອນ, ຫີນ ແລະ ຊາຍ ຕາມບັນ ດາສາຍນໍ້າ, ຮ່ອງຫ້ວຍ ແລະ ການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆໃນຂອບເຂດທົ່ວປະເທດ ສະບັບເລກທີ 06/ນຍ, ລົງວັນທີ 07 ມີນາ 2025;
- ອີງຕາມ ຄໍາສັ່ງນາຍົກລັດຖະມົນຕີວ່າດ້ວຍການຕ້ານ ແລະ ສະກັດກັ້ນການລັກລອບຂຸດຄົ້ນ, ປຸງແຕ່ງ, ເກັບ ຊື້-ຂາຍ, ນໍາເຂົ້າ-ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດຕ່າງໆທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການໃນຂອບເຂດທົ່ວປະເທດ ສະບັບເລກທີ 46/ນຍ, ລົງວັນທີ 13 ເມສາ 2026;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແບ່ງວຽກລະຫວ່າງນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ ສະບັບເລກທີ 28/ນຍ, ລົງວັນທີ 20 ເມສາ 2026;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1692/ຫສນຍ, ລົງວັນທີ 08 ຕຸລາ 2025.

ເພື່ອສຸມໃສ່ຈັດຕັ້ງຜັນຂະຫຍາຍ ມະຕິ ສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງໃນໄລຍະໃໝ່ ແລະ ຈັດຕັ້ງປະຕິບັດ ຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຕິດຕາມ, ກວດກາ ແລະ ການແກ້ໄຂບັນຫາການຄຸ້ມຄອງການຂຸດຄົ້ນແຮ່ທາດຕ່າງໆໃນຂອບເຂດທົ່ວປະເທດ; ຄໍາສັ່ງວ່າດ້ວຍການຕ້ານ ແລະ ສະກັດກັ້ນການລັກລອບຂຸດຄົ້ນ, ປຸງແຕ່ງ, ເກັບຊື້-ຂາຍ, ນໍາເຂົ້າ-ສົ່ງອອກແຮ່ທາດ ແລະ ຜະລິດຕະພັນແຮ່ທາດຕ່າງໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໃນຂອບເຂດທົ່ວປະເທດ.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກຄໍາແນະນໍາ**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຄໍາແນະນໍາສະບັບນີ້ ກໍານົດຫຼັກການ ແລະ ລະບຽບການກ່ຽວກັບການກວດກາຄືນຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ ເພື່ອໃຫ້ຖືກຕ້ອງສອດຄ່ອງກົດໝາຍ ແລະ ລະບຽບການ, ມາດຕະຖານແຫ່ງຊາດ, ພາກພື້ນ ແລະ ສາກົນ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ ອັນຊອບທໍາ ຂອງລັດ ແລະ ຜູ້ດໍາເນີນທຸລະກິດ ເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ**

ການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ ແມ່ນການດໍາເນີນການກວດກາຄືນຄຸນນະພາບແຮ່ທາດ ຂອງຫ້ອງກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ບັນດາດ່ານສາກົນ ແລະ ສະຖານີຂົນສົ່ງສິນຄ້າທາງລົດໄຟ ໂດຍການນໍາໃຊ້ເຄື່ອງມືອຸປະກອນ, ເຕັກໂນໂລຊີທີ່ທັນສະໄໝ ແລະ ໄດ້ມາດຕະຖານ

ເຂົ້າໃນການຢັ້ງຢືນຄຸນນະພາບແຮ່ທາດ ໂດຍມີການສົມທຽບຄວາມເຂັ້ມຂຸ້ນຂອງແຮ່ທາດທີ່ໄດ້ຮັບການວິໄຈຢູ່ຕົ້ນທາງ ລວມເຖິງບໍລິມາດ, ນ້ຳໜັກ ແລະ ຊະນິດຂອງແຮ່ທາດຢູ່ປາຍທາງ ພ້ອມທັງອອກໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ເພື່ອຮັບປະກັນການສົ່ງອອກແຮ່ທາດ ມີປະສິດທິພາບ, ປະສິດທິຜົນ, ຖືກຕ້ອງໂປ່ງໃສ ແລະ ຮັບປະກັນຜົນປະໂຫຍດສູງສຸດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຄຳແນະນຳສະບັບນີ້ ນຳໃຊ້ກັບຂະແໜງການເງິນ, ຂະແໜງການອື່ນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງ ນິຕິບຸກຄົນ ທີ່ດຳເນີນທຸລະກິດການຂຸດຄົ້ນ, ສົ່ງອອກແຮ່ທາດ ແລະ ຜູ້ປະກອບການຂົນສົ່ງແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ.

## ໝວດທີ 2
## ຂັ້ນຕອນການດຳເນີນການ, ການກວດກາມາດຕະຖານ ແລະ ໃບຢັ້ງຢືນຄຸນນະພາບ ກ່ອນການສົ່ງອອກ

**ມາດຕາ 4 ຂັ້ນຕອນໃນດຳເນີນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ**

ຂັ້ນຕອນດຳເນີນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ມີດັ່ງນີ້:

1. ເກັບຕົວຢ່າງແຮ່ທາດຢູ່ລານແຮ່, ລົດຂົນສົ່ງແຮ່ ຫຼື ຢູ່ຕູ້ຄອນເທນເນີ ໃຫ້ຖືກຕ້ອງຕາມຫຼັກວິຊາການລວມທັງກະກຽມຕົວຢ່າງ (ບົດ, ຄັດແຍກ, ອົບແຫ້ງ) ໃຫ້ຢູ່ໃນຮູບແບບທີ່ເໝາະສົມ ສຳລັບການວິເຄາະດ້ວຍເຄື່ອງມືເຕັກນິກຂັ້ນສູງ ແຕ່ລະຊະນິດແຮ່ທາດ;
2. ກະກຽມແຮ່ທາດສຳລັບການເກັບຕົວຢ່າງດ້ວຍການແຍກຊະນິດ ແລະ ຄຸນນະພາບແຮ່ທາດໃຫ້ຊັດເຈນ ເພື່ອໃຫ້ການເກັບຕົວຢ່າງສະທ້ອນຄຸນນະພາບທີ່ແທ້ຈິງ ແລະ ເປັນໄປຕາມຫຼັກການສາກົນ;
3. ກວດກາຄຸນລັກສະນະແຮ່ທາດຕົວຈິງ ເຊັ່ນ: ຄວາມຊຸ່ມ, ຂະໜາດ ແລະ ຄວາມໜາແໜ້ນ;
4. ນຳໃຊ້ເຄື່ອງມືທັນສະໄໝ ເຊັ່ນ: XRF (X-ray Fluorescence), ICP-MS ແລະ ICP-OES, Titration, Element Analyzer, Bomb Calorimeter, Fire Assay ແລະ ເຄື່ອງມືອື່ນໆ ສຳລັບການວິເຄາະຫາຊະນິດແຮ່ທາດ ແລະ ປະລິມານຄວາມເຂັ້ມຂຸ້ນຂອງແຮ່ທາດຢ່າງລະອຽດ;
5. ດຳເນີນການປຽບທຽບຜົນການກວດກາວິໄຈ ແລະ ຢັ້ງຢືນຄຸນນະພາບແຮ່ທາດລະຫວ່າງ ກົມທໍລະນີສາດ ແລະ ບໍ່ແຮ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຫ້ອງກວດກາວິໄຈ ແລະ ຢັ້ງຢືນຄຸນນະພາບແຮ່ທາດກ່ອນການສົ່ງອອກ ຂອງກະຊວງການເງິນ;
6. ຮັບຮອງຜົນການຢັ້ງຢືນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ;
7. ບັນທຶກ ແລະ ຈັດເກັບຂໍ້ມູນຜົນວິໄຈເຂົ້າໃນລະບົບ LIMS ເພື່ອເຊື່ອມໂຍງກັບຖານຂໍ້ມູນຂອງກະຊວງການເງິນແບບ Real-time.

**ມາດຕາ 5 ການກວດກາມາດຕະຖານ**

ການກວດກາຄຸນນະພາບແຮ່ທາດ ໃຫ້ໄດ້ມາດຕະຖານ ມີດັ່ງນີ້:

1. ແຮ່ທາດຕ້ອງດຳເນີນຢູ່ພາຍໃນຫ້ອງວິໄຈກວດກາແຮ່ທາດ ແລະ ນຳໃຊ້ວິທີການທີ່ໄດ້ ມາດຕະຖານສາກົນ;
2. ນຳຕົວຢ່າງທີ່ຜ່ານການບົດລະອຽດ ເຂົ້າເຄື່ອງກວດກາວິໄຈແຮ່ທາດ;
3. ນຳຜົນການກວດກາຄວາມຖືກຕ້ອງ ແລະ ຢັ້ງຢືນຄຸນນະພາບແຮ່ທາດ ມາປຽບທຽບກັບມາດຕະຖານ ISO ເພື່ອຊອກຫາປະລິມານຄວາມເຂັ້ມຂຸ້ນຂອງແຮ່ທາດ;
4. ມາດຕະຖານອື່ນໆ.

**ມາດຕາ 6 ໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ**

ໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ ມີເນື້ອໃນດັ່ງນີ້:

1. ຂໍ້ມູນພື້ນຖານ ປະກອບດ້ວຍ ລະຫັດໃບຢັ້ງຢືນ, ວັນທີອອກ, ຊື່ລູກຄ້າ ແລະ ຂໍ້ມູນການເກັບຕົວຢ່າງ;
2. ມາດຕະຖານ ISO ຂອງແຮ່ທາດແຕ່ລະຊະນິດ;
3. ຄ່າຄວາມເຂັ້ມຂຸ້ນຂອງແຮ່ທາດ;
4. ລົງລາຍເຊັນ ແລະ ປະທັບຕາ.

## ໝວດທີ 3
## ການປະກອບເອກະສານ ແລະ ຂັ້ນຕອນການແຈ້ງພາສີ

**ມາດຕາ 7 ການປະກອບເອກະສານ**

ເອກະສານປະກອບໃນການຂໍການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກມີ ດັ່ງນີ້:

1. ແຜນການຈຳໜ່າຍແຮ່ທາດ ທີ່ໄດ້ຮັບຮອງຈາກກະຊວງອຸດສາຫະກຳ ແລະ ການຄ້າ;
2. ໃບອະນຸຍາດ ແລະ/ຫຼື ໃບຢັ້ງຢືນການສົ່ງອອກແຮ່ທາດ;
3. ໜັງສືແຈ້ງການຈຳໜ່າຍຜະລິດຕະພັນແຮ່ທາດ;
4. ໃບຄິດໄລ່ລາຄາຄ່າຊົບພະຍາກອນ ແລະ ໃບແຈ້ງມອບຜ່ານລະບົບ TaxRIS;
5. ໃບຢັ້ງຢືນການມອບພັນທະຄ່າຊົບພະຍາກອນ;
6. ໃບຢັ້ງຢືນການເຄື່ອນຍ້າຍແຮ່ທາດ;
7. ປຶ້ມບັນທຶກຕິດຕາມການເຄື່ອນຍ້າຍແຮ່ທາດ;
8. ສັນຍາຊື້ຂາຍແຮ່ທາດ;
9. ໃບຢັ້ງຢືນແຫຼ່ງກຳເນີດແຮ່ທາດ;
10. ໃບແຈ້ງພາສີໂດຍສັງເຂບ;
11. ໃບແຈ້ງພາສີເປັນລາຍລະອຽດ;
12. ໃບແຈ້ງລາຄາສິນຄ້າ;
13. ໃບລາຍການຫຸ້ມຫໍ່;
14. ໃບຢັ້ງຢືນຄຸນນະພາບແຮ່ທາດຈາກຫ້ອງກວດກາຄຸນນະພາບກ່ອນການສົ່ງອອກ;
15. ເອກະສານອື່ນໆ ທີ່ກ່ຽວຂ້ອງ.

**ມາດຕາ 8 ຂັ້ນຕອນການແຈ້ງພາສີ**

ຜູ້ແຈ້ງພາສີ ຫຼື ຜູ້ບໍລິການແຈ້ງພາສີ ຕ້ອງດຳເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ, ປະກອບເອກະ ສານທີ່ກ່ຽວຂ້ອງກັບການສົ່ງອອກແຮ່ທາດ ຫຼື ແຮ່ທາດທີ່ຜ່ານຂະບວນການປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ລວມທັງໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກ ຈາກຫ້ອງກວດກາຄຸນນະພາບ; ພ້ອມທັງຊຳລະຄ່າພາສີຂາອອກ ແລະ ຄ່າທຳນຽມຕ່າງໆໃຫ້ຖືກຕ້ອງ, ຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ອັດຕາຄ່າບໍລິການ, ການຊຳລະ ແລະ ການສະຫຼຸບລາຍງານ

**ມາດຕາ 9 ການກຳນົດອັດຕາຄ່າບໍລິການ**

ການກຳນົດອັດຕາຄ່າບໍລິການ ໃຫ້ປະຕິບັດດັ່ງນີ້:

1. ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
2. ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 10 ຫົວໜ່ວຍຄິດໄລ່ຄ່າບໍລິການ**

ອັດຕາຄ່າບໍລິການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ ແມ່ນເກັບໃນອັດຕາເດັດຖານ ໂດຍກຳນົດເອົາລາຄາລະຫວ່າງ 0.35–0.94 ໂດລາສະຫະລັດ ຕໍ່ 01 ຫົວໜ່ວຍ (ໂຕນ, ກຣາມ, ກະຣັດ ແລະ ອື່ນໆ) ຂອງແຮ່ທາດແຕ່ລະປະເພດ (ສຳລັບລາຍລະອຽດອັດຕາຄ່າບໍລິການໄດ້ມີເອກະສານຊ້ອນທ້າຍຄັດຕິດ).

**ມາດຕາ 11 ການຊຳລະ**

ການຊຳລະຄ່າບໍລິການ ມີດັ່ງນີ້:

1. ຫ້ອງກວດກາຄຸນນະພາບແຮ່ທາດ ອອກໃບເກັບເງິນໃຫ້ກັບຜູ້ປະກອບການ ແລະ ຕ້ອງຊຳລະກ່ອນການສົ່ງອອກ;
2. ຊຳລະຜ່ານລະບົບລວມສູນທັນສະໄໝ ຂອງກະຊວງການເງິນ.

**ມາດຕາ 12 ການສະຫຼຸບລາຍງານ**

ຫ້ອງກວດກາຄຸນນະພາບແຮ່ທາດກ່ອນສົ່ງອອກຢູ່ປາຍທາງ ຕ້ອງເກັບກຳ, ສ້າງຖານຂໍ້ມູນເພື່ອເຊື່ອມຕໍ່ເຂົ້າກັບລະບົບຄຸ້ມຄອງທັນສະໄໝຂອງຂະແໜງພາສີ (Smart Customs) ເພື່ອສະຫຼຸບສັງລວມ ແລະ ລາຍງານຂໍ້ມູນທີ່ຕິດພັນກັບການສົ່ງອອກແຮ່ທາດ ເປັນຕົ້ນແມ່ນ: ປະເພດ, ບໍລິມາດ ແລະ ຄຸນນະພາບຂອງແຮ່ທາດ; ຈຳນວນລົດຂົນສົ່ງ ຫຼື ຕູ້ຄອນເທນເນີ, ດ່ານ/ສະຖານີ ທີ່ສົ່ງອອກ , ບໍລິສັດຜູ້ສົ່ງອອກ ແລະ ຍອດລາຍຮັບຄ່າບໍລິການ ເປັນລາຍເດືອນ, ໄຕມາດ, 06 ເດືອນ ແລະ ປະຈຳປີ.

## ໝວດທີ 5
## ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກະຊວງການເງິນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ

**ມາດຕາ 13 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງກະຊວງການເງິນ**

ກະຊວງການເງິນ ເປັນເຈົ້າການໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ ໂດຍສຸມໃສ່ດຳເນີນການດັ່ງນີ້:

1. **ຫ້ອງການ ກະຊວງການເງິນ:**

ເປັນເຈົ້າການປະສານສົມທົບກັບບັນດາກົມພາຍໃນຂອງກະຊວງການເງິນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ກວດກາ ແລະ ປະເມີນຈຸດດີ, ຈຸດອ່ອນ, ບັນຫາຂໍ້ຫຍຸ້ງຍາກ, ພ້ອມທັງ ຄົ້ນຄວ້າປຶກສາຫາລືມາດຕະການໃນການແກ້ໄຂບັນຫາຕ່າງໆໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອລາຍງານຄະນະນຳກະຊວງການເງິນ ແລະ ລັດຖະບານໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1) **ຂະແໜງອຸດສະຫະກຳ ແລະ ການຄ້າ:** ເພື່ອອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດວຽກງານການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ; ສະໜອງບັນດາເອກະສານທີ່ຕິດພັນກັບການກວດກາວິໄຈແຮ່ທາດຢູ່ຕົ້ນທາງ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ.
2) **ຂະແໜງໂຍທາທິການ ແລະ ຂົນສົ່ງ:** ເພື່ອຊຸກຍູ້ ລັດວິສະຫະກິດທາງລົດໄຟແຫ່ງຊາດລາວ ແລະ ບໍລິສັດທາງລົດໄຟລາວ-ຈີນ ໃນການອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດວຽກງານ ການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ.

3) **ກົມກ່ຽວຂ້ອງຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ:**

ເພື່ອສັງລວມຜົນການຈັດຕັ້ງປະຕິບັດການກວດກາແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ ໃນແຕ່ລະໄລຍະໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ສະໜອງຂໍ້ມູນທີ່ຈໍາເປັນໃນການກວດກາດັ່ງກ່າວ ໃຫ້ລັດຖະບານຊາບ ເປັນປະຈໍາປົກກະຕິ ຫຼື ໃນກໍລະນີທີ່ມີລັກສະເພາະ, ຮີບດ່ວນອື່ນໆຕາມຕົວຈິງ ແລະ ຕາມການຊີ້ນໍາຂອງລັດຖະບານ ໃຫ້ທັນກັບສະພາບການ; ລວມທັງການຂໍຄໍາເຫັນຊີ້ນໍາຈາກລັດຖະບານ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

**2. ຂະແໜງພາສີ**

1) ຄຸ້ມຄອງ, ຕິດຕາມ, ກວດກາ, ຮັບຮອງ ເອກະສານປະກອບການແຈ້ງພາສີເປັນລາຍລະອຽດຕາມລະບົບຄຸ້ມຄອງທັນສະໄໝຂອງຂະ ແໜງພາສີ (Smart Customs) ສໍາລັບການສົ່ງອອກແຮ່ທາດ ພ້ອມທັງນໍາໃຊ້ລະບົບເອເລັກໂຕຣນິກໃນການກວດກາ ແລະ ບໍລິຫານຄວາມສ່ຽງໃນການສົ່ງອອກ ເປັນຕົ້ນ: ເຄື່ອງສາຍແສງ (SCANNER), ຊິງຊັ່ງທັນສະໄໝ, ກ້ອງວົງຈອນປິດ ແລະ ລະບົບອື່ນຢ່າງມີປະສິດທິພາບ;
2) ຈັດເກັບລາຍຮັບພາສີ ແລະ ພັນທະອື່ນໆ ຈາກການສົ່ງອອກແຮ່ທາດໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນເວລາຕາມກົດໝາຍ ແລະ ລະບຽບການກໍານົດ;
3) ປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອຮັບປະກັນການເຊື່ອມຈອດຂໍ້ມູນສໍາລັບການສົ່ງອອກແຮ່ທາດ, ອົງການປົກຄອງທ້ອງຖິ່ນ ແລະ ຫ້ອງກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານການສົ່ງອອກແຮ່ທາດ ຕາມກົດໝາຍ ແລະ ລະບຽບການ;
4) ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການດໍາເນີນການຕັດກົ່ວ ຂອງຄະນະກໍາມະການກວດກາແຮ່ທາດຂັ້ນຢູ່ຕົ້ນທາງ ໃນກໍລະນີມີຂໍ້ສົງໃສ ແລະ ມີຂໍ້ມູນແຫຼ່ງຂ່າວຊັດເຈນວ່າມີການລັກລອບສົ່ງອອກແຮ່ທາດ ໂດຍມີການກວດກາຕົວຈິງຮ່ວມກັນກ່ອນການສົ່ງອອກຢູ່ດ່ານພາສີຊາຍແດນ;
5) ສົມທົບກັບຄະນະວິຊາການຫ້ອງກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ເພື່ອ: (1) ເກັບຕົວຢ່າງແຮ່ທາດຢູ່ລານພັກແຮ່, ລົດຂົນສົ່ງແຮ່ ຫຼື ຢູ່ຕູ້ຄອນເທນເນີ ໃຫ້ຖືກຕ້ອງຕາມຫຼັກວິຊາການລວມທັງກະກຽມຕົວຢ່າງ (ບົດ, ຄັດແຍກ, ອົບແຫ້ງ) ໃຫ້ຢູ່ໃນຮູບແບບທີ່ເໝາະສົມສໍາລັບການວິເຄາະດ້ວຍເຄື່ອງມືເຕັກນິກຂັ້ນສູງ ຂອງແຕ່ລະຊະນິດແຮ່ທາດ ເພື່ອໃຫ້ການເກັບຕົວຢ່າງສະທ້ອນຄຸນນະພາບທີ່ແທ້ຈິງ ແລະ ເປັນໄປຕາມຫຼັກການສາກົນ;(2)ກວດກາຄຸນລັກສະນະແຮ່ທາດຕົວຈິງ ເຊັ່ນ: ຄວາມຊຸ່ມ, ຂະໜາດ ແລະ ຄວາມໜາ ແໜ້ນ; (3) ນໍາໃຊ້ເຄື່ອງມືທັນສະໄໝ ທີ່ໄດ້ກໍານົດໄວ້ໃນຂໍ້ທີ 4, ມາດຕາ 4 ຂອງໝວດທີ 2 ສໍາລັບການວິເຄາະຫາຊະນິດແຮ່ທາດ ແລະ ປະລິມານຄວາມເຂັ້ມຂຸ້ນຂອງແຮ່ທາດຢ່າງລະອຽດ; (4) ດໍາເນີນການສົມທຽບຜົນການກວດກາຄຸນນະພາບແຮ່ທາດ ລະຫວ່າງ ກົມທໍລະນີສາດ ແລະ ບໍ່ແຮ່ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ຫ້ອງກວດກາມະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ ຂອງກະຊວງການເງິນ; (5) ຄຸ້ມຄອງ, ຕິດຕາມການບັນທຶກ ແລະ ຈັດເກັບຂໍ້ມູນຜົນວິໄຈເຂົ້າໃນລະບົບ ກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ເພື່ອເຊື່ອມຕໍ່ກັບຖານຂໍ້ມູນຂອງກະຊວງການເງິນ ແບບທັນທີ (Real Time) ແລະ (6) ສະໜອງຂໍ້ມູນທີ່ໄດ້ຈາກການກວດກາຄຸນນະພາບແຮ່ທາດ ໃຫ້ແກ່ເຈົ້າໜ້າທີ່ພາສີ ແລະ ສ່ວຍສາອາກອນ ເພື່ອຄິດໄລ່ຄ່າພາສີຂາອອກ, ຄ່າຊົດເຊີຍພະຍາກອນທໍາມະຊາດ ແລະ ພັນທະອື່ນໆ ໃນກໍລະນີມີການຜິດດ່ຽງດ້ານຄຸນນະພາບລະຫວ່າງຕົ້ນທາງ ແລະ ປາຍທາງ;
6) ຮັບຮອງ ແລະ ອອກໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດ ກ່ອນການສົ່ງອອກຢູ່ປາຍທາງ;
7) ນໍາໃຊ້ມາດຕະການຄວບຄຸມທາງພາສີ ສໍາລັບການສົ່ງອອກແຮ່ທາດ ຕາມກົດໝາຍ ແລະ ລະບຽບການ;
8) ປະຕິບັດໜ້າທີ່ອື່ນໆຕາມພາລະບົດບາດ ໂດຍສອດຄ່ອງກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**3. ຂະແໜງສ່ວຍສາອາກອນ**

1) ກວດກາຄວາມຖືກຕ້ອງຂອງເອກະສານທີ່ຕິດພັນກັບການສົ່ງອອກແຮ່ທາດຢູ່ຕົ້ນທາງ;
2) ຄຸ້ມຄອງເກັບລາຍຮັບຄ່າຊັບພະຍາກອນແຮ່ທາດ ຕາມແຜນປະຈໍາປີ ແລະ ຄິດໄລ່ ຄ່າຊັບພະຍາກອນ ເປັນແຕ່ລະຄັ້ງ ຕາມໜັງສືແຈ້ງການຈໍາໜ່າຍຜະລິດຕະພັນແຮ່ທາດ ຂອງກົມທໍລະນີສາດ ແລະ ບໍ່ແຮ່ ເຂົ້າງົບປະມານ ແຫ່ງລັດ ຜ່ານລະບົບ TaxRis ຢ່າງລວມສູນ;
3) ອອກໃບຢັ້ງຢືນການເສຍພັນທະໃຫ້ກັບຜູ້ປະກອບການສົ່ງອອກແຮ່ທາດ ຕາມກົດໝາຍ;
4) ນໍາໃຊ້ຜົນກວດກາ ແລະ ຢັ້ງຢືນຄຸນນະພາບແຮ່ທາດ ເພື່ອເປັນຂໍ້ມູນອ້າງອີງໃນການຄິດໄລ່ຄືນຄ່າຊັບພະຍາກອນ ຕາມຂໍ້ມູນຕົວຈິງຢູ່ປາຍທາງ; ກໍລະນີ ຜົນການກວດກາຄຸນນະພາບແຮ່ທາດຢູ່ປາຍທາງ ຫາກສູງກວ່າຢູ່ຕົ້ນທາງ ຕ້ອງໄດ້ຄິດໄລ່ຄືນຄ່າຊັບພະຍາກອນ ແລະ ກໍລະນີຜົນການກວດກາ ຫາກຕໍ່າກວ່າແມ່ນໃຫ້ປະຕິບັດຕາມຄໍາແນະນໍາຂອງກະຊວງການເງິນ ກ່ຽວກັບການຈັດຕັ້ງປະຕິບັດລັດຖະບັນຍັດວ່າດ້ວຍອັດຕາຄ່າຊັບພະຍາກອນທໍາມະຊາດ ໃນແຕ່ລະໄລຍະ;
5) ຕິດຕາມການແຈ້ງເສຍ ແລະ ການຊໍາລະພັນທະ ຜ່ານລະບົບ TaxRis ເຂົ້າງົບປະມານແຫ່ງລັດ;
6) ປະຕິບັດໜ້າທີ່ອື່ນໆ ຕາມພາລະບົດບາດໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**4. ຂະແໜງຄຸ້ມຄອງຊັບສິນແຫ່ງລັດ**

1) ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາ ແຜນການສົ່ງອອກແຮ່ທາດ (ຈໍານວນ, ນໍ້າໜັກ, ບໍລິມາດ ແລະ ອື່ນໆ), ການເຄື່ອນຍ້າຍຊັບພະຍາກອນແຮ່ທາດ ເພື່ອຈໍາໜ່າຍພາຍໃນ ແລະ ສົ່ງອອກ ແຕ່ຕົ້ນທາງ (ປາກບໍ່ ແລະ ລານພັກແຮ່ທີ່ນອນຢູ່ນອກເຂດສໍາປະທານ) ຮອດຈຸດປາຍທາງ ໃນຂອບເຂດທົ່ວປະເທດຕາມກົດໝາຍ ແລະ ລະບຽບການ;
2) ສັງລວມແຜນຈໍາໜ່າຍແຮ່ທາດຂອງບັນດາໂຄງການບໍ່ແຮ່ ທີ່ໄດ້ຮັບອະນຸຍາດສໍາປະທານ ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດເພື່ອການຈໍາໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ຕາມຂໍ້ຕົກລົງຮັບຮອງແຜນການຈໍາໜ່າຍຂອງແຕ່ລະບໍລິສັດ;
3) ບັນທຶກປະລິມານແຮ່ເພື່ອເອົາແຮ່ຂຶ້ນລົດ, ໜີບກົ່ວ ທຸກຄັ້ງກ່ອນການຈໍາໜ່າຍແຮ່ທາດ ແລະ ຫັກລົບແຜນປະຈໍາປີໃນການຈໍາໜ່າຍແຕ່ລະຄັ້ງ;
4) ຕິດຕາມລາຄາແຮ່ທາດ ຢູ່ຕະຫຼາດສາກົນ, ພາກພື້ນ ແລະ ພາຍໃນປະເທດ ເພື່ອເປັນຖານຂໍ້ມູນຄິດໄລ່ ຄ່າຊັບພະຍາກອນແຮ່ທາດ ໃນແຕ່ລະໄລຍະ;
5) ປະຕິບັດໜ້າທີ່ອື່ນໆ ຕາມພາລະບົດບາດໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**5. ກົມຄຸ້ມຄອງວິສາຫະກິດການເງິນ**

ຄຸ້ມຄອງ, ຕິດຕາມ ແລະ ສະຫຼຸບ-ສັງລວມບັນຫາທີ່ກ່ຽວຂ້ອງ ໂດຍສົມທົບກັບຫ້ອງການກະຊວງການເງິນ ລາຍງານຄະນະນໍາກະຊວງການເງິນ ເປັນແຕ່ລະໄລຍະ; ພ້ອມທັງ ຕິດຕາມ, ປະເມີນ ແລະ ລາຍງານຜົນໄດ້ຮັບຈາກການຮ່ວມຮຸ້ນຂອງລັດຖະບານ ຕາມການດໍາເນີນທຸລະກິດ ໃນໂຄງການດັ່ງກ່າວຢ່າງເປັນປົກກະຕິ.

**6. ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ**

1) ຄົ້ນຄວ້າ, ພັດທະນາ, ຄຸ້ມຄອງ ແລະ ຕິດຕາມການນໍາໃຊ້ລະບົບການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ທີ່ເຊື່ອມໂຍງເຂົ້າກັບລະບົບທັນສະໄໝຂອງກະຊວງການເງິນ, ພ້ອມທັງກໍານົດສິດຜູ້ນໍາໃຊ້ ແລະ ຕິດຕາມການນໍາໃຊ້ລະບົບດັ່ງກ່າວ;
2) ເປັນໃຈກາງປະສານສົມທົບກັບ ຫ້ອງການກະຊວງການເງິນ ໃນການເຊື່ອມໂຍງຖານຂໍ້ມູນລະບົບຂອງ ເຂົ້າກັບລະບົບທັນເປັນທັນສະໄໝຕ່າງໆ ຂອງກະຊວງການເງິນ ເພື່ອຮັບປະກັນໃຫ້ສາມາດຕິດຕາມໄດ້ທັນການ (Real time);

3) ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຜ່ານການນຳໃຊ້ລະບົບທີ່ທັນສະໄໝ ເພື່ອຮັບປະກັນໃຫ້ສາມາດດຳເນີນການໄດ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
4) ເປັນເຈົ້າການໃນການຕິດຕາມ, ກວດກາ, ປະເມີນດ້ານດີ, ຂໍ້ຄົງຄ້າງ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດວຽກງານການເຊື່ອມໂຍງ-ເຊື່ອມຈອດ ຫຼື ການພັດທະນາລະບົບ, ພ້ອມທັງຄົ້ນຄວ້າປຶກສາຫາລື ເພື່ອມີມາດຕະການແກ້ໄຂບັນຫາຕ່າງໆ ໃຫ້ທັນກັບສະພາບການ.
5) ປະຕິບັດໜ້າທີ່ອື່ນໆ ຕາມພາລະບົດບາດໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ຂະແໜງການອື່ນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ:** ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານການກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກຢູ່ປາຍທາງ; ສະໜອງບັນດາເອກະສານທີ່ຕິດພັນກັບການກວດກາວິໄຈແຮ່ທາດຢູ່ຕົ້ນທາງ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ.

## ໝວດທີ 6
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ຂໍ້ຫ້າມ**

**1. ຕໍ່ເຈົ້າໜ້າທີ່ລັດ**

ຫ້າມພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ທີ່ກ່ຽວຂ້ອງມີພຶດຕິກຳໃດໜຶ່ງ ດັ່ງນີ້:
1) ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວຂອງຕົນ;
2) ຂໍເອົາ, ທວງເອົາ ຫຼື ຮັບສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;
3) ເປັນນາຍໜ້າ, ທີ່ປຶກສາໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ກ່ຽວກັບວຽກງານກວດກາຄຸນນະພາບແຮ່ທາດກ່ອນການສົ່ງອອກ ໃຫ້ກັບຜູ້ປະກອບການ;
4) ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ບໍ່ຖືກຕ້ອງຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງລັດ ແລະ ເອກະຊົນ;
5) ກີດຂວາງ, ຖ່ວງດຶງ, ລະເລີຍຕໍ່ການປະຕິບັດໜ້າທີ່, ປອມແປງເອກະສານຜົນການກວດກາຄຸນນະພາບແຮ່ທາດ, ປອມແປງລາຍເຊັນ, ກາປະທັບ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;
6) ປິດບັງ, ຊຸກເຊື່ອງ ແລະ ໃຫ້ຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ;
7) ເປີດເຜີຍຂໍ້ມູນຄວາມລັບສະເພາະ ກ່ຽວກັບການກວດກາຄຸນນະພາບແຮ່ທາດ ໃຫ້ກັບບຸກຄົນພາຍນອກ ໂດຍບໍ່ໄດ້ຮັບອະນຸຍາດ;
8) ມີພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**2. ຕໍ່ຜູ້ປະກອບການ**
1) ສົ່ງອອກແຮ່ທາດ ໂດຍບໍ່ໄດ້ຮັບການກວດກາຄຸນນະພາບຈາກປາຍທາງ;
2) ປອມແປງໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດ, ຕາປະທັບ, ລາຍເຊັນ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງ;
3) ປິດບັງ, ຊຸກເຊື່ອງ ແລະ ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງຂອງແຮ່ທາດທີ່ສົ່ງອອກ;
4) ປະຕິເສດການຮ່ວມມື ຫຼື ຂັດຂວາງ ການກວດກາຄຸນນະພາບແຮ່ທາດ;
5) ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມ ການຈັດຕັ້ງ ແລະ ພະນັກງານຂອງລັດ ລວມທັງພະນັກງານຫ້ອງກວດກາຄຸນນະພາບແຮ່ທາດ ໂດຍບໍ່ມີຂໍ້ມູນຄວາມຈິງ;

6) ເຄື່ອນຍ້າຍ ຫຼື ຂົນສົ່ງແຮ່ທາດເກີນນ້ຳໜັກ, ເກີນຈຳນວນ, ເກີນຂະໜາດ ຫຼື ບໍ່ຖືກຕ້ອງກັບເອກະສານ;
7) ໃຫ້ສິນບົນແກ່ພະນັກງານທີ່ກວດກາຄຸນນະພາບແຮ່ທາດ ດ້ວຍວິທີການຕ່າງໆ;
8) ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານລັດ ແລະ ເຈົ້າໜ້າທີ່ກວດກາຄຸນນະພາບແຮ່ທາດ;
9) ນຳໃຊ້ໃບຢັ້ງຢືນຜົນການກວດກາຄຸນນະພາບ ໃຫ້ກັບລົດຂົນສົ່ງ, ຕູ້ຄອນເທນເນີ ຄັນອື່ນ ທີ່ບໍ່ກົງກັບເລກທະບຽນລົດ ຫຼື ລະຫັດຕູ້ຄອນເທນເນີ ທີ່ໄດ້ແຈ້ງກັບເຈົ້າໜ້າທີ່ຫ້ອງກວດການະພາບແຮ່ທາດ;
10) ນຳໃຊ້ໃບຢັ້ງຢືນຜົນການກວດກາຄຸນນະພາບແຮ່ທາດ ໃຫ້ກັບບຸກຄົນທີ່ສາມ;
11) ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ**

ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດຄຳແນະນຳສະບັບນີ້ ເປັນຕົ້ນການຊຸກຍູ້, ສົ່ງເສີມ, ໃຫ້ການຮ່ວມມື, ອຳນວຍຄວາມສະດວກ, ການໃຫ້ບໍລິການ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງມີປະສິດທິຜົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆຕາມລະບຽບການ.

**ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ**

ການຈັດຕັ້ງ, ນິຕິບຸກຄົນ ແລະ ບຸກຄົນ ທີ່ລະເມີດຄຳແນະນຳສະບັບນີ້ຈະຖືກກ່າວເຕືອນ, ສຶກສາອົບຮົມ ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 18 ວິທີການຈັດຕັ້ງປະຕິບັດ**

1. ຫ້ອງການກະຊວງການເງິນ ເປັນເຈົ້າການປະສານສົມທົບກັບ ພະແນກການເງິນນະຄອນຫຼວງ, ບັນດາແຂວງ, ຫ້ອງການການເງິນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງເຜີຍແຜ່, ແນະນຳໃຫ້ຜູ້ປະກອບການສົ່ງອອກແຮ່ທາດ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ;
2. ໃນກໍລະນີມີຂໍ້ຄົງຄ້າງທີ່ເກີດຂຶ້ນຈາກການປະຕິບັດຄຳແນະນຳສະບັບນີ້, ຫ້ອງການກະຊວງການເງິນຕ້ອງເປັນເຈົ້າການສົມທົບກັບບັນດາກະຊວງ-ອົງການຢູ່ຂັ້ນສູນກາງ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຄົ້ນຄວ້າປຶກສາຫາລື, ຊອກວິທີແກ້ໄຂ ແລະ ນຳສະເໜີຂໍທິດຊີ້ນຳຈາກຂັ້ນເທິງໃຫ້ທັນສະພາບການຕາມຂັ້ນຕອນ ແລະ ລະບຽບການ.

**ມາດຕາ 19 ຜົນສັກສິດ**

ຄຳແນະນຳສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີ**

ກະຊວງການເງິນ
ລັດຖະມົນຕີ

ສັນຕິພາບ ພົມວິຫານ